ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----໙໙໙໙-----

ກະຊວງໂຍທາທິການ ແລະ ຂົນສົ່ງ

ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ

2638

ເລກທີ.............../ຍທຂ.ນວ

ລົງວັນທີ ...01 AUG 2014...

# ຂໍ້ກຳນົດເພີ່ມເຕີມ

## ກ່ຽວກັບການຄຸ້ມຄອງປ້າຍຂ້າມທາງ,ປ້າຍຫ້ອຍເສົາ, ການມັດຈຳ ແລະ ການປັບໃໝ

- ອີງຕາມຄຳສັ່ງແນະນຳເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 010/ຈນວ, ລົງວັນທີ 13/09/2014.
- ອີງຕາມຂໍ້ກຳນົດເພີ່ມເຕີມ ສະບັບເລກທີ 1439/ຍທຂ.ນວ,ລົງວັນທີ 23/04/2014, ກ່ຽວກັບການຕິດຕັ້ງປ້າຍໂຄສະນາຂ້າມທາງ, ແລະ ປ້າຍຫ້ອຍຕາມເສົາໄຟ ຕາມຖະໜົນສາຍສຳຄັນຕ່າງໆ ໃນ ນະຄອນຫຼວງວຽງຈັນ.
- ອີງຕາມການຄົ້ນຄ້ວາເຫັນດີ ຂອງ ຄະນະພະແນກ ຍທຂ ນະຄອນຫຼວງວຽງຈັນ ວັນທີ 28/07/2014.

ເພື່ອຈັດຕັ້ງ ແລະ ຜັນຂະຫຍາຍ ລົງເລິກກ່ຽວກັບການຄຸ້ມຄອງປ້າຍ ເຮັດໃຫ້ການຄຸ້ມຄອງປ້າຍໂຄສະນາປ້າຍຂ້າມທາງ ແລະ ປ້າຍຫ້ອຍຕາມເສົາໄຟ ເປັນໄປ ຕາມທິດຊີ້ນຳຂອງຂັ້ນເທິງ ແລະ ມີຄວາມເປັນລະບຽບຮຽບຮ້ອຍຮັບປະກັນບໍ່ໃຫ້ເກີດຄວາມເສຍຫາຍແກ່ບຸກຄົນອື່ນແລະ ກີດຂວາງການສັນຈອນຕາມຖະໜົນ. ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ຈຶ່ງໄດ້ອອກຂໍ້ກຳນົດເພີ່ມເຕີມ ດັ່ງນີ້ :

ມາດຕາ 1 : ການຕິດຕັ້ງປ້າຍໂຄສະນາຂ້າມທາງ ແລະ ປ້າຍຫ້ອຍຕາມເສົາໄຟ, ຕ້ອງຕິດຕັ້ງຕາມຖະໜົນ, ເສັ້ນທາງ ທີ່ໄດ້ກຳນົດໃຫ້ , ຍົກເວັ້ນຖະໜົນສາຍສຳຄັນຕາມຂໍ້ກຳນົດເພີ່ມເຕີມ ສະບັບເລກທີ 1439/ຍທຂ.ນວ, ລົງ ວັນທີ 23/04/2014 ແລະ ຕ້ອງຮັບປະກັນທາງດ້ານເຕັກນິກຄື :

- ຂະໜາດຂອງປ້າຍຂ້າມທາງ :
  - ຄວາມກ້ວາງ 0,8 ແມັດ-1,2 ແມັດ.
  - ຄວາມຍາວ 8 ແມັດ-12 ແມັດ.
  - ການຕິດຕັ້ງສູງຈາກໜ້າທາງ ຫາຈຸດຕ່ຳສຸດຂອງປ້າຍ ບໍ່ໃຫ້ຫຼຸດ 5,50 ແມັດ.
- ຂະໜາດຂອງປ້າຍຫ້ອຍຕາມເສົາໄຟ :
  - ຄວາມກ້ວາງ 0,6 ແມັດ-1,00 ແມັດ.
  - ຄວາມຍາວ 1,5 ແມັດ-2,00 ແມັດ.
  - ການຕິດຕັ້ງສູງຈາກໜ້າທາງຍ່າງ ຫາຈຸດຕ່ຳສຸດຂອງປ້າຍ ບໍ່ໃຫ້ຫຼຸດ 2,50 ແມັດ.
- ໄລຍະຫ່າງການຕິດຕັ້ງປ້າຍທັງສອງປະເພດບໍ່ໃຫ້ຫຼຸດ 200 ແມັດ/ຈຸດ.

ມາດຕາ 2 : ເພື່ອຮັບປະກັນໃນການເກັບກູ້ປ້າຍໃນກໍລະນີສຸກເສີນ, ປ້າຍສີກຂາດ,ເຊືອກຈ່ອງປ້າຍຂາດ

ເຮັດໃຫ້ກີດຂວາງການສັນຈອນ, ເປັນອັນຕະລາຍແກ່ ຊີວິດ ແລະ ຊັບສິນ ຂອງບຸກຄົນທີ່ທ່ຽວໄປມາ ເຊິ່ງຜູ້ຂໍອະນຸຍາດຕິດຕັ້ງປ້າຍຈະຕ້ອງໄດ້ຈ່າຍຄ່າມັດຈຳ ດັ່ງນີ້ :

❖ **ຄ່າມັດຈຳ:**

- ປ້າຍຂ້າມທາງ ຈຳນວນ 1-10 ປ້າຍ, ມັດຈຳ 1,000,000 ກີບ.
  ຈຳນວນ 10-20 ປ້າຍ, ມັດຈຳ 2,000,000 ກີບ.
  (10 ປ້າຍໃດມັດຈຳ 1,000,000 ກີບ).
- ປ້າຍຫ້ອຍຕາມເສົາໄຟ ຈຳນວນ 1-100 ປ້າຍ, ມັດຈຳ 1,000,000 ກີບ.
  ຈຳນວນ 100-200 ປ້າຍ, ມັດຈຳ 2,000,000 ກີບ.
  ຈຳນວນ 200-300 ປ້າຍ, ມັດຈຳ 3,000,000 ກີບ.
  (100 ປ້າຍໃດ ມັດຈຳ 1,000,000 ກີບ).

-ປ້າຍທີ່ຕິດຕັ້ງຢູ່ຈຸດຕ່າງໆຈະຕ້ອງໄດ້ຂໍອະນຸຍາດຈາກພາກສ່ວນຄຸ້ມຄອງກ່ອນການຕິດຕັ້ງ ກໍລະນີ ການຕິດຕັ້ງບໍ່ໄດ້ຂໍອະນຸຍາດ ຫຼື ໄດ້ອະນຸຍາດແລ້ວ ແລະ ໝົດກຳນົດອະນຸຍາດແຕ່ບໍ່ມີການເກັບກູ້ປ້າຍຄືນພາຍໃນ 1 ວັນ, ເຊິ່ງຜູ້ຂໍອະນຸຍາດ, ຖືກປັບໃໝຕາມຈຳນວນປ້າຍທີ່ອອກອະນຸຍາດໃຫ້ດັ່ງນີ້ :

❖ **ຄ່າປັບໃໝ**

- ປ້າຍຂ້າມທາງ ປັບໃໝ 500,000 ກີບ/ປ້າຍ.
- ປ້າຍຫ້ອຍເສົາໄຟ ປັບໃໝ 50,000 ກີບ/ປ້າຍ.

<u>ມາດຕາ 3</u> : ການຕິດຕັ້ງປ້າຍຂ້າມທາງ ແລະ ປ້າຍຫ້ອຍແມ່ນອະນຸຍາດໃຫ້ ບໍ່ເກີນ 10 ວັນ ແລະ ສາມາດຕໍ່ໄດ້ 1 ຄັ້ງ, ຖ້າຄົບຕາມກຳນົດເວລາທີ່ໄດ້ຂໍອະນຸຍາດແລ້ວຜູ້ຂໍອະນຸຍາດ ຫຼື ຜູ້ຕິດຕັ້ງປ້າຍຈະຕ້ອງໄດ້ເອົາປ້າຍລົງ ພາຍໃນ 1 ວັນ, ພ້ອມທັງ ແຈ້ງຕໍ່ຄະນະຜູ້ຮັບຜິດຊອບເພື່ອລົງກວດກາ ຢັ້ງຢືນ ແລະ ຮັບເງິນມັດຈຳຄືນ.

<u>ມາດຕາ 4</u> : ຜູ້ຂໍອະນຸຍາດລວມທັງຜູ້ຮັບເໝົາໃນການຕິດຕັ້ງຕ້ອງຮັບຜິດຊອບຕໍ່ການຕິດຕັ້ງທຸກປະການ.

<u>ມາດຕາ 5</u> : ຜູ້ທີ່ລະເມີດ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປັບໃໝ ແລະ ດຳເນີນ ການຕາມລະບຽບກົດໝາຍບ້ານເມືອງ.

ດັ່ງນັ້ນ, ຈຶ່ງໄດ້ອອກຂໍ້ກຳນົດສະບັບນີ້ໄວ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ.

| | |
|---|---|
| ຫົວໜ້າ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ | ຫົວໜ້າຂະແໜງຄຸ້ມຄອງເຄຫາ-ຜັງເມືອງ ແລະ ສິ່ງແວດລ້ອມ |
| ພົງສີ່ງຕານ ທຳມະວົງ | |